# ເຖິງແມ່ນວ່າທ່ານໄດ້ຢູ່ໃກ້ສິດກັບກໍລະນີທີ່ມີເຊື້ອພະຍາດຝີດາດລີງ (hMPXV (Monkeypox)) ກໍ່ຕາມ

ເຊື້ອພະຍາດຝີດາດລີງ (hMPXV) ບໍ່ແຜ່ລາມໄດ້ງ່າຍ. ສູ່ຊີຕິດເຊື້ອໄດ້, ທ່ານຕ້ອງມີການສໍາຜັດທາງຜິວໜັງກັບໃຜບາງຄົນທີ່ເຈັບປ່ວຍທີ່ມີເຊື້ອພະຍາດຝີດາດລີງ (hMPXV). ນອກຈາກນັ້ນ ທ່ານກໍ່ຍັງສາມາດຕິດເຊື້ອພະຍາດຝີດາດລີງ (hMPXV) ໄດ້ຈາກການຍໍເຄື່ອງນຸ່ງຫົ່ມ, ຜູ້ປູຕຽງນອນ, ຫຼື ເຄື່ອງຂອງອື່ນໆທີ່ໄດ້ສໍາຜັດກັບຜິວໜັງທີ່ເປັນຜື່ນຄັນຂອງບຸກຄົນປ່ວຍອີກດ້ວຍ. ປົກກະຕິແລ້ວບໍ່ຄ່ອຍມີ, ທີ່ການຕິດເຊື້ອສາມາດເກີດຂຶ້ນໄດ້ໃນເວລາຢູ່ໃກ້ສິດ, ໃກ້ສິດເຊິ່ງໜ້າກັນເປັນເວລາດົນ (ດົນກວ່າ 3 ຊົ່ວໂມງ).

## ການເຂົ້າໃຈລະດັບຄວາມສ່ຽງຂອງທ່ານ

ຖ້າທ່ານໄດ້ຢູ່ໃກ້ສິດກັບໃຜບາງຄົນທີ່ເຈັບປ່ວຍທີ່ມີເຊື້ອພະຍາດຝີດາດລີງ (hMPXV) ແລ້ວ, ພະນັກງານສາທາລະນະສຸກອາດຈະກວດເບິ່ງກັບທ່ານເພື່ອເກັບຂໍ້ມູນເພີ່ມເຕີມ. ການກວດເບິ່ງແບບນີ້ຈະຊ່ວຍກໍານົດໄດ້ລະດັບຄວາມສ່ຽງຂອງທ່ານ ແລະ ວ່າທ່ານຄວນຈະໄດ້ຮັບວັກຊີນ ຫຼື ບໍ່. ການໃຫ້ວັກຊີນໃຫ້ໃຜບາງຄົນຫຼັງຈາກພວກເຂົາໄດ້ສໍາຜັດໃກ້ສິດນັ້ນສາມາດຊ່ວຍປ້ອງກັນການຕິດເຊື້ອ ຫຼື ອາການຮ້າຍແຮງໄດ້.

- **ຖ້າທ່ານມີການສໍາຜັດໃກ້ສິດທີ່ມີຄວາມສ່ຽງສູງໃດໜຶ່ງ:** ໃຫ້ຕິດຕາມເບິ່ງອາການໄຂ້ ແລະ ອາການອື່ນໆ ຕາມລາຍການຂ້າງລຸ່ມນີ້.

  ແນະນໍາໃຫ້ໄປສັກວັກຊີນ.

- **ຖ້າທ່ານມີການສໍາຜັດໃກ້ສິດທີ່ມີຄວາມສ່ຽງປານກາງໃດໜຶ່ງ:** ໃຫ້ຕິດຕາມເບິ່ງອາການໄຂ້ ແລະ ອາການອື່ນໆ ຕາມລາຍການຂ້າງລຸ່ມນີ້.

  ໃຫ້ພິຈາລະນາການໄປສັກວັກຊີນເພື່ອປົກປ້ອງທ່ານຈາກການຕິດເຊື້ອພະຍາດຝີດາດລີງ (hMPXV) ທີ່ຮ້າຍແຮງ. ປຶກສາຫາລືທາງເລືອກຂອງເຈົ້າກັບພະນັກງານສາທາລະນະສຸກ ແລະ ຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບຂອງເຈົ້າ.



PN 1130501 (07/18/2022) LAO

- **ຖ້າທ່ານມີການສຳຜັດໃກ້ສິດທີ່ມີຄວາມສ່ຽງຕ່ຳໃດໜຶ່ງ:** ໃຫ້ຕິດຕາມເບິ່ງອາການໄຂ້ ແລະ ອາການອື່ນໆ. ບໍ່ຈຳເປັນສັກວັກຊີນ.

## ໃຫ້ຕິດຕາມເບິ່ງອາການຕ່າງໆ

ໃຜກໍ່ຕາມທີ່ໄດ້ສຳຜັດໃກ້ສິດກັບເຊື້ອໄວລັສພະຍາດຝີດາດລີງ (hMPXV virus) ຄວນຕິດຕາມເບິ່ງອາການເຫຼົ່ານີ້:

- ຜື່ນຄັນໃໝ່
- ໄຂ້ $\geq$ 100.4
- ຕ່ອມນ້ຳເຫຼືອງ
- ໄຂ້ໜາວ

ກວດເບິ່ງອຸນຫະພູມຂອງທ່ານສອງຄັ້ງຕໍ່ມື້. ໃຫ້ຕິດຕາມເບິ່ງອາການຕ່າງໆເປັນເວລາ 21 ວັນ ຫຼັງຈາກການສຳຜັດຄັ້ງສຸດທ້າຍຂອງທ່ານ. ອາການອາດຈະເລີ່ມໃນຊ່ວງເວລາໃດກໍເປັນໄດ້ລະຫວ່າງມື້ທີ 5 ຫາ ມື້ທີ 21.

ຖ້າທ່ານມີອາການເຫຼົ່ານີ້, ໃຫ້ແຍກຕົວທ່ານອອກຈາກຄົນອື່ນ ແລະ ໂທຫາພະແນກສາທາລະນະສຸກປະຈຳທ້ອງຖິ່ນຂອງທ່ານ ສຳລັບຂໍ້ແນະນຳເພີ່ມເຕີມ.

## ຄຳແນະນຳ

**ເມື່ອໃດກໍ່ຕາມທີ່ທ່ານບໍ່ມີອາການຫຍັງ, ທ່ານສາມາດສືບຕໍ່ໄປເຮັດວຽກ, ໄປໂຮງຮຽນ, ແລະ ເຮັດກິດຈະກຳອື່ນໆໄດ້.**

ຫຼີກເວັ້ນການສຳຜັດໃກ້ກິດຕິ່ມອີກກັບບຸກຄົນປ່ວຍຈົນກວ່າຜື່ນຄັນຂອງບຸກຄົນນັ້ນດີຫາຍຂາດແລ້ວ. ຢ່າບໍລິຈາກເລືອດ, ນ້ຳອະສຸຈິ, ນົມແມ່, ເນື້ອເຍື່ອ, ຫຼື ເຮັດການບໍລິຈາກທີ່ຄ້າຍຄືກັນນີ້ໃນຂະນະທີ່ທ່ານກຳລັງຕິດຕາມເບິ່ງອາການ. ຖ້າທ່ານມີການສຳຜັດໃກ້ສິດທີ່ມີຄວາມສ່ຽງສູງໃດໜຶ່ງ, ຫຼີກເວັ້ນການເດີນທາງຜ່ານການຂົນສົ່ງສາທາລະນະຈົນກ່ວາການຕິດຕາມອາການ 21 ມື້ຂອງທ່ານສິ້ນສຸດລົງ. ຖ້າທ່ານເປັນຜູ້ເຮັດວຽກດ້ານການບໍລິການເບິ່ງແຍງດູແລສຸຂະພາບຜູ້ໜຶ່ງ, ບອກໃຫ້ນາຍຈ້າງຂອງທ່ານຮູ້ກ່ຽວກັບການສຳຜັດໃກ້ສິດດັ່ງກ່າວ.

**ການເຂົ້າເຖິງຂໍ້ມູນ:** ສ□າລັບບຸກຄົນພິການ ຫຼື ຜູ້ທີ່ເວົ້າພາສາອື່ນທີ່ບໍ່ແມ່ນພາສາອັງກິດ, ອົງການສາທາລະນະສຸກ ລັດໂອເຣກອນ ສາມາດໃຫ້ຂໍ້ມູນໃນຫຼາຍຮູບແບບເຊັ່ນ: ການແປພາສາ, ການພິມຂະໜາດໃຫຍ່ ຫຼື ອັກສອນນູນ. ຕິດຕໍ່ຫາ ໜ່ວຍງານສື່ສານ ໂຄວິດ-19 ທີ່ເບີ 1-971-673-2411, 711 TTY or COVID19.LanguageAccess@dhsoha.state.or.us